# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 30 ພຶສຈິກາ 2008 (11-30-2008)

---

### <u>ພັນທະກິດທີ່ຂ້າພະເຈົ້າກຳລັງຮັບໃຊ້ຢູ່</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ໂຣມ 15:14-21, 30-33; 16:25-27

ບົດຮຽນນີ້ຈະຊ່ວຍທ່ານໃຫ້ເຮັດໃນແຕ່ລະຂັ້ນຕອນໃນການປັບປຸງຂອງຂໍ້ຂາດຕົກບົກພ່ອງໃນຊີວິດຂອງທ່ານລະຫວ່າງການນະມັສການແລະການເປັນພະຍານ.

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ:</u>**

ບົດຮຽນນີ້ໃຫ້ຈຸດສົນໃຈເຮົາໃນແຜ່ນການເດີນທາງປ່າວປະກາດຂ່າວປະເສີດຂອງອາຈານໂປໂລ. ການອ້ອນວອນຂອງເພິ່ນຕໍ່ຜູ້ທີ່ເຊື່ອໃຫ້ອະທິຖານເພື່ອໃຫ້ພົ້ນຈາກພັຍອັນຕະລາຍໃນການເດີນທາງ, ແລະການສັຣເສີນພຣະເຈົ້າຂອງເພິ່ນໃນການປະກາດຂ່າວປະເສີດ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:</u>**

ມີຄຣິສຕຽນຫຼາຍໆຄົນຍັງບໍ່ເຂົ້າໃຈກັບການຊົງເປີດເຜີຍພຣະທັມແຫ່ງຄວາມຈິງຂອງພຣະເຈົ້າໃນຊີວິດຂອງເຂົາ. ພວກເຂົາ " ເຂົ້າໃຈ " ວ່າການນະມັສການ, ຫຼືການສັຣເສີນພຣະເຈົ້າໃນເຊົ້າວັນອາທິດຄວນຈະເປັນຜົນດີໃນການເປັນພະຍານໃຫ້ກັບພຣະເຈົ້າໃນວັນຈັນແລະວັນຕໍ່ໆໄປ. ເຫດວ່າພວກເຂົາກຳລັງນະມັສການພຣະເຈົ້າຜູ້ທີ່ຊົງປະທານພຣະບຸດຂອງພຣະອົງໄດ້ທຳພາຣະກິດທຸກຢ່າງເພື່ອເຂົາໃຫ້ເປັນທີ່ສຳເຣັດຜົນ. ພວກເຂົາແມ່ນຕ້ອງການເຮັດຢູ່ສອງຢ່າງຄື: ຍ້ອງຍໍສັຣເສີນພຣະເຈົ້າຢູ່ໃນຄຣິສຕະຈັກແລະຮ່ວມມືກັນກັບອົງພຣະຜູ້ເປັນເຈົ້າທາງສັງຄົມຝ່າຍນອກ.

ບົດຮຽນນີ້ຈະເຮັດໃຫ້ເຫັນເຖິງຄວາມຕົງກັນຂ້າມກັນລະຫວ່າງການນະມັສການແລະການເປັນພະຍານຝ່າຍຂ່າວປະເສີດແລະການຊອກສແວງຫາຫົນທາງທີ່ຈະນຳຄົນທັງຫລາຍໃຫ້ເຂົ້າມາຫາພຣະເຈົ້າໃນທາງການດຳລົງຊີວິດຂອງຜູ້ທີ່ເຊື່ອໃນທຸກໆ ບ່ອນທີ່ທ່ານໄປ ໃນທຸກມື້ນີ້ທ່ານຈະພົບເຫັນ, ຄວາມງົດງາມໃນການຕົກແຕ່ງສະຖານທີ່ຕ່າງໆ, ຄວາມປາກົດເດັ່ນທາງວັດທະນະທັມ, ບົດເພງຂອງເທດສະການຕ່າງໆ ເຫຼົ່ານີ້, ບັນຫາແມ່ນມີຢູ່ວ່າສິ່ງທັງໝົດນີ້ໄດ້ດຶງເອົາຈຸດສົນໃຈຂອງເຮົາອອກຈາກຄວາມໝາຍອັນແທ້ຈິງວັນຄຣິສມາດ. ການກ່ຽວພັນກັບທຸກສິ່ງທີ່ເຫັນໃນມື້ນີ້ກັບການເອົາພຣະຄຣິດມາກ່ອນ(ເປັນນຶ່ງ) ແມ່ນຍາກຫລາຍ.

ບາງເວລາກໍແມ່ນພົບກັບຄວາມລຳບາກແທ້ໃນການສ້າງຄວາມສຳພັນໃນລະຫວ່າງມີຫຍັງເກີດຂຶ້ນໃນຄຣິສຕະຈັກໃນວັນອາທິດແລະມີອັນໃດແດ່ເກີດຂຶ້ນກັບຊີວິດຂອງເຮົາໃນວັນຈັນ. ແຕ່ໃນວັນອາທິດຂອງພວກເຮົາກໍບໍ່ຄວນຈະແຕກຕ່າງຈາກມື້ວັນຈັນຂອງເຮົາ. ນີ້ແມ່ນສາມຈຸດປະສົງໃຫຍ່ໃນບົດຮຽນນີ້ຈະຊ່ວຍໃຫ້ພວກເຮົາເຫັນໃນສິ່ງທີ່ເກີດຂຶ້ນ.

### <u>ສຶກສາພຣະຄັມພີ</u>

**1. <u>ປ່າວປະກາດຂ່າວປະເສີດ:</u>** (ໂຣມ 15:14–21 )

ໃນພຣະທັມໂຣມ 12:1–15 ບົດທີ 13 ອາຈານໂປໂລໄດ້ໃຫ້ຄຳແນະນຳຂອງການໃຊ້ຊີວິດຕາມແບບການດຳລົງຊີວິດຂອງຄຣິສຕຽນ. ໃນຂໍ້ເລີ້ມຕົ້ນຂອງບົດທີ 15:14, ເພິ່ນໄດ້ເຮັດໃຫ້ຮູ້ແນ່ນອນວ່າເພິ່ນບໍ່ໄດ້ໝາຍຄວາມວ່າຊາວ

ໂຣມຜູ້ທີ່ເຊື່ອນັ້ນບໍ່ໄດ້ດຳລົງຊີວິດຕາມທີ່ເຂົາຄິດເຫັນ. ເພິ່ນແນ່ນອນໃຈວ່າພວກເຂົາດຳລົງຊີວິດຢູ່ດ້ວຍຄວາມດີແລະພ້ອມດ້ວຍຄວາມຮູ້ທຸກຢ່າງແລະສາມາດທຈະເຕືອນສະຕິກັນແລະກັນໄດ້ ຈຸດປະສົງຂອງການຂຽນຈົດໝາຍມາຫາຂອງເພິ່ນບໍ່ແມ່ນເປັນການວິພາວິຈານແຕ່ເປັນການໜູນໃຈ, ຊູກຳລັງໃຈ, ເໝືອນເປັນຜູ້ນຳຝ່າຍຂ່າວປະເສີດ. ອາຈານໂປໂລແມ່ນຜູ້ປະກາດຂ່າວປະເສີດຂອງພຣະເຈົ້າໃຫກັບທຸກຄົນ. ທ່ານມີຄວາມກ້າໃນການຂຽນຈົດໝາຍສະບັບນີ້ຂຶ້ນກໍເພາະວ່າແມ່ນສ່ວນນຶ່ງຂອງພາຣະກິດການຮັບໃຊ້ຂອງພຣະເຈົ້າເຊິ່ງໄດ້ມອບໃຫ້ແກ່ເພິ່ນ.

ອາຈານໂປໂລຖືເອົາພື້ນຖານວຽກງານການຮັບໃຊ້ຂອງເພິ່ນນັ້ນມາຈາກການຊົງນຳພາຂອງພຣະເຈົ້າທີ່ຊົງໂຜດປະທານໃຫ້ກັບເພິ່ນ. ອາຈານໂປໂລໄດ້ຖືກຮຽກເອີ້ນຈາກພຣະເຈົ້າໃຫ້ນຳຂ່າວປະເສີດໄປຍັງຄົນຕ່າງຊາດ. ອາຈານໂປໂລໄດ້ມອບຖວາຍພາຣະກິດທຸກຢ່າງໃຫ້ເປັນການສັຣເສີນພຣະກຽດແກ່ອົງພຣະຄຣິດ ໃນທຸກສິ່ງທີ່ປະສົບຜົນສຳເຣັດໃນການຮັບໃຊ້ຂອງເພິ່ນ. ທ່ານບໍ່ສາມາດອວດສິ່ງໃດໆ ທັງໝົດນອກຈາກສິ່ງທີ່ພຣະຄຣິດໄດ້ກະທຳໃຫ້ເປັນທີ່ສຳເຣັດໃນຕົວເພິ່ນ. ອາຈານໂປໂລໄດ້ປ່າວຂ່າວປະເສີດຕາມທຸກສິ່ງທີ່ເພິ່ນໄດ້ເວົ້າມາ ຕລອດຊົ່ວຊີວິດຂອງເພິ່ນມີຄວາມຜູກພັນຢູ່ກັບພຣະທັມຄຳສອນຂອງເພິ່ນແລະການອິດທິຣິດແລະຄວາມຫ່ວງໃຍ.

ທ່ານແລະຂ້າພະເຈົ້າ, ກໍຄືກັນ, ທີ່ມີຄວາມຮັບຜິດຊອບໃນການນຳຂ່າວປະເສີດຂອງຄວາມລອດພົ້ນໃນອົງພຣະເຢຊູຄຣິດຜ່ານທາງການບອກເລົ່າຂອງພວກເຮົາແລະທາງການດຳເນີນຊີວິດຂອງພວກເຮົາ. ໃນຫຼາຍຄັ້ງຄົນເຮົາມີຄວາມຮູ້ສຶກວ່າຕົວເຮົາເອງແມ່ນຍັງບໍ່ມີຄວາມກ້າຫານພຽງພໍທີ່ຈະກ່າວ, ເຣື່ອງຄວາມຄວາມລອດພົ້ນໃຫ້ກັບຜູ້ອື່ນຟັງແລະໃນຕົວຂອງເຮົາກໍມີຄວາມເຊື່ອ ຄວາມຈິງແມ່ນພວກເຮົາທັງຫຼາຍບໍ່ກ້າຫານພໍ, ແຕ່ຜົນປາກົດອອກມາບໍ່ແມ່ນຂຶ້ນຢູ່ໃນຕົວເຮົາ. ພວກເຮົາບໍ່ມີໜ້າທີ່ຕ້ອງຮັບຜິດຊອບຕໍ່ການຕອບສນອງຂອງພວກເຂົາໃນການເປັນພະຍານຂອງເຮົາພວກ ເຮົາມີໜ້າທີ່ຮັບຜິດຊອບຕໍ່ການເປັນພະຍານຂອງເຮົາຕໍ່ຄວາມພົ້ນອັນໃຫຍ່ຫຼວງຂອງພຣະຄຣິດເທົ່ານັ້ນ.

ອາຈານໂປໂລໄດ້ປະກາດຂ່າວປະເສີດເຣື່ອງຂອງພຣະຄຣິດໄປທົ່ວທຸກທົ່ນແຫ່ງຕັ້ງແຕ່ກຸງເຢຣູຊາເລັມອ້ອມໄປຍັງແຂວງອີລີຣີກົນ. ນີ້ບໍ່ໄດ້ໝາຍຄວາມວ່າເພິ່ນຕ້ອງໄດ້ເວົ້ານແຕ່ລະບຸກຄົນຫຼືວ່າເພິ່ນຕ້ອງໄດ້ອະທິບາຍທຸກໆ ສິ່ງຢ່າງລະອຽດກ່ຽວກັບພຣະເຢຊູ. ທ່ານມີຄວາມເພິ່ງພໍໃຈເປັນຢ່າງຍິ່ງທີ່ໄດ້ເປັນພະຍານຢູ່ໃນເຂດນີ້. ອາຈານໂປໂລເວົ້າວ່ານີ້ແມ່ນການປະກາດຂ່າວປະເສີດໃນເຂດທ້ອງຖິ່ນນີ້ຍັງມີເຂດໃດແດ່ທີ່ບໍ່ໄດ້ຍິນ. ຄວາມມຸ້ງມາດປາຖນາຂອງເພິ່ນແມ່ນວ່າຕ້ອງການໃຫ້ທຸກໆ ຄົນໄດ້ມີໂອກາດໄດ້ຮູ້ຈັກອົງພຣະເຢຊູຄຣິດເປັນພຣະຜູ້ໂຜດໃຫ້ພົ້ນ. ນີ້ແມ່ນອີກທາງນຶ່ງທີ່ທ່ານແລະຂ້າພະເຈົ້າສາມາດໄຄ່ວຄວ້າເອົາຄົນທີ່ຍັງບໍ່ທັນໄດ້ຮູ້ຈັກພຣະຄຣິດເທື່ອ ແມ່ນໃຫ້ອະທິຖານເພື່ອເຂົາ ແລະອີກອັນນຶ່ງກໍ່ແມ່ນໃຫ້ຄວາມອຸປະຖັມກັບອົງການ " International Mission Board Missionaries. " ຂອງພວກເຮົາ. ອີກທາງນຶ່ງພວກເຮົາສາມາດໄປເຖິງຄົນທີ່ຍັງບໍ່ເຊື່ອໂດຍການທີ່ເຮັດໃຫ້ວັນອາທິດຂອງພວກເຮົາເປັນພະຍານອັນດີພ້ອມທັງວັນຈັນຂອງພວກເຮົາ.

**2. <u>ອະທິຖານເພື່ອຜົນສຳເຣັດ:</u>** ( ໂຣມ 15:30–33 )

ໃນພຣະຄັມພີຕອນນີ້ອາຈານໂປໂລໄດ້ອ້ອນວອນຂໍໃຫ້ຜູ້ທີ່ເຊື່ອອະທິຖານ ແລະໄຫວ້ວອນພຣະເຈົ້າເພື່ອທ່ານ ( ເພິ່ນ ) ເພາະວ່າອາຈານໂປໂລຮູ້ວ່າຄຳອະທິຖານຂອງຜູ້ທີ່ເຊື່ອຫຼາຍຄົນນັ້ນເປັນພລັງອັນແຮງກ້າທີ່ຈະໄດ້ຮັບຄຳຕອບຈາກພຣະເຈົ້າ.

ອາຈານ ໂປໂລຮູ້ດີວ່າເພິ່ນເອງອາດຈະບໍ່ມີກຳລັງພຽງພໍທີ່ຈະປະເຊີນກັບບັນຫາທີ່ຄອຍຖ້າເພິ່ນໃນຂ້າງໜ້ານັ້ນ ( ກິຈການ 20:22–24 ) ອາຈານໄດ້ຂໍໃຫ້ພວກຄຣິສຕຽນທີ່ຢູ່ກຸງໂຣມອະທິຖານເພື່ອເພິ່ນຈະໄດ້ພົ້ນຈາກມືຂອງຄົນທີ່ບໍ່ເຊື່ອໃນແຂວງຢູດາ. ແລະອະທິຖານເພື່ອໃຫ້ການປະຕິບັດເນື່ອງດ້ວຍຜົນທານຊຶ່ງເພິ່ນໄດ້ນຳໄປຍັງກຸງເຢຣູຊາເລັມນັ້ນຈະເປັນທີ່ພໍໃຈແກ່ພວກໄພ່ພົນຂອງພຣະເຈົ້າທີ່ນັ້ນ. ແລະທັງເພື່ອເພິ່ນຈະໄດ້ກັບຄືນໄປຫາພີ່ນ້ອງຢູ່ທີ່ກຸງໂຣມອີກຕາມຊອບພຣະທັຍພຣະເຈົ້າດ້ວຍຄວາມຊົມຊື່ນຍິນດີແລະມີຄວາມເບີກບານສຳລານໃຈ.

ໃນກິຈການ ບົດທີ 20 ຫາບົດທີ 28 ໄດ້ເປີດເຜີຍໃຫ້ຮູ້ວ່າ ພຣະເຈົ້າໄດ້ຕອບຄໍາອະທິຖານຂອງເພິ່ນ ແລະຜູ້ທີ່ອະທິຖານເພື່ອເພິ່ນ. ເຖິງຢ່າງໃດກໍ່ດີ ຄໍາຕອບທີ່ເພິ່ນໄດ້ຮັບນັ້ນບໍ່ໄດ້ມາໃນຮູບແບບຂອງຄຣິສຕຽນປັດຈຸບັນນີ້ໄດ້ຮັບ.ອາຈານໂປໂລບໍ່ໄດ້ຫລຸດຈາກບັນຫາທີ່ຫຍຸ້ງຍາກນັ້ນ, ກົງກັນຂ້າມ ຄວາມຫຍຸ້ງຍາກຂອງເພິ່ນແຫ່ງເພີ້ມຂຶ້ນອີກ. ຕົວຢ່າງເຊັ່ນການຫ້າມປາມ, ການທໍ້ໃຈ ແລະການກີດຂວາງອື່ນໆ. ແຕ່ອາຈານໂປໂລຮູ້ດີວ່າພຣະເຈົ້າໄດ້ຊົງເອີ້ນເພິ່ນໃຫ້ມາເຕັດພຣະຣາຊກິດຂອງພຣະອົງແລະເພິ່ນກໍ່ຮູ້ດີວ່າພຣະເຈົ້າຈະຊົງຊ່ວຍໃຫ້ເພິ່ນທໍາໃຫ້ສໍາເຣັດໄດ້.

ຊີວິດຂອງອາຈານໂປໂລໄດ້ຢືນຢູ່ໃນທາງກົງກັນຂ້າມກັບຜູ້ທີ່ຈະເຊື່ອວ່າເພິ່ນຈະເປັນຄົນຂອງພຣະເຈົ້າແທ້ບໍ່? ຫຼືເປັນຜູ້ທີ່ມີຄວາມເຊື່ອພຽງພໍທີ່ຈະບໍ່ໄດ້ມີປະສົບປະການຕໍ່ຄວາມຍາກລໍາບາກໃນຊີວິດ. ໃນ 2 ໂກຣິນໂທ 11:16-33 ພວກເຮົາໄດ້ພົບວ່າອາຈານໂປໂລໄດ້ທົນທຸກທໍຣະມານຫຼາຍຢ່າງຫຼາຍແນວດ້ວຍພຣະນາມຂອງພຣະຄຣິດ. ອາຈານໂປໂລມີຄວາມສັດຊື່ບໍ່ແມ່ນຍ້ອນເຫັນວ່າມັນເປັນສິ່ງທີ່ງ່າຍ, ແຕ່ອາຈານໂປໂລມີຄວາມສັດຊື່ເພາະເພິ່ນໄດ້ຮູ້ຈັກອົງພຣະຄຣິດ. ຄວາມສັມພັນລະຫວ່າງ ອາຈານໂປໂລກັບພຣະເຢຊູໄດ້ນໍາຄວາມພໍອົກພໍໃຈມາສູ່ວິນຍານຂອງເພິ່ນ. ເມື່ອເພິ່ນບອກກັບຜູ້ທີ່ເຊື່ອໃນກຸງໂຣມວ່າ: ຂໍພຣະເຈົ້າຊົງໂຜດສັນຕິສຸກຈົ່ງສະຖິດຢູ່ກັບເຈົ້າທັງຫລາຍເຖີດ. ນັ້ນແມ່ນເພິ່ນເວົ້າອອກມາຈາກຄວາມຮູ້ຢ່າງແທ້ຈິງ, ແລະການພົວພັນກັບພຣະເຈົ້າຜູ້ສາມາດນໍາສັນຕິສຸກອັນແທ້ຈິງມາໄດ້ແທ້. ສະນັ້ນວິທີທາງນຶ່ງຂອງພວກເຮົາທີ່ຈະນໍາຜົນສະທ້ອນຈາກວັນອາທິດເຖິງວັນຈັນກໍ່ຄື ພຽງແຕ່ບອກຄົນອື່ນກ່ຽວກັບຜູ້ທີ່ສາມາດນໍາສັນຕິສຸກອັນແທ້ຈິງມາໃຫ້ເທົ່ານັ້ນ. ນີ້ລະຄືພວກເຮົາສາມາດອະທິຖານເພື່ອຄວາມສໍາເຣັດໃນນັ້ນ.

**3. <u>ສັຣເສີນພຣະເຈົ້າ</u>** ( ໂຣມ 16:25-27 )

ອາຈານໂປໂລໄດ້ສລຸບຈົດໝາຍຂອງເພິ່ນໂດຍຖວາຍພຣະກຽດແລະສັນລະເສີນພຣະອົງ. ຄໍາສັຣເສີນພຣະເຈົ້າເຫຼົ່ານີ້ມີຫຼາຍເນື້ອຫາຊຶ່ງອາຈານໂປໂລໄດ້ບອກໄວ້ຕອນຕົ້ນຂອງພຣະທັມໂຣມ. ອາຈານໂປໂລໄດ້ຍອມຮັບວ່າພຣະເຈົ້າຜູ້ຊົງຣິດສາມາດຊ່ວຍແລະໃຫ້ກໍາລັງແກ່ຜູ້ທີ່ເຊື່ອໄດ້. ຂ່າວຂອງອາຈານໂປໂລເປັນຂ່າວປະເສີດຂອງຂອງພຣະເຢຊູຄຣິດ, ແລະໄດ້ສລຸບໃນ ( ໂຣມ 6:23 ) " ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າກໍ່ຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິດຄືພຣະເຢຊູເຈົ້າຂອງພວກເຮົາ." ຊີວິດທີ່ມີການປ່ຽນແປງບໍ່ແມ່ນໄດ້ຍິນຂ່າວປະເສີດເທົ່ານັ້ນແຕ່ແມ່ນການຕອບສນອງຂອງການຮຽກເອີ້ນແລະໃຫ້ຄໍາໝັ້ນສັນຍາຕໍ່ບຸກຄົນຜູ້ນຶ່ງ, ຄືພຣະເຢຊູຄຣິດ.

ເວລາເປັນຂອງພຣະອົງເອງ, ພຣະອົງໄດ້ເປີດເຜີຍຂໍ້ຄວາມອັນເລິກລັບຊຶ່ງໄດ້ປົກບັງໄວ້ຕັ້ງແຕ່ອະດີດຕະການພຸ້ນ, ແຕ່ບັດນີ້ໄດ້ເປີດເຜີຍໃຫ້ປາກົດແລ້ວແລະໂດຍຄັມພີຂອງຜູ້ປະກາດພຣະທັມຊຶ່ງພຣະເຈົ້າຜູ້ຊົງຕັ້ງຢູ່ຖາວອນໄດ້ຊົງບັນຍັດໄວ້ ຊຶ່ງໃຫ້ຄໍາໝັ້ນສັນຍາເຖິງການສະເດັດມາຂອງພຣະເມຊີອາ, ແລະຄວາມລອດພົ້ນໃຫ້ແກ່ຄົນທັງປວງ .

ຂໍ້ພຣະຄັມພີທີ່ຂ້າພະເຈົ້າມັກທີ່ສຸດຄື :( ຄາລາເຕັຽ 4:4 – 5 ) " ແຕ່ເມື່ອຄົບກໍານົບແລ້ວພຣະເຈົ້າກໍ່ຊົງໃຊ້ພຣະບຸດຂອງພຣະອົງມາຊົງປະສູດຈາກຜູ້ຍິງ, ແລະຊົງຖືກໍາເນີດໃຕ້ພຣະບັນຍັດ . ເພື່ອຈະຊົງໄຖ່ເອົາຄົນເຫຼົ່ານັ້ນທີ່ຢູ່ໃຕ້ພຣະບັນຍັດເພື່ອໃຫ້ພວກເຮົາໄດ້ຖານະເປັນບຸດ." ການປະສູດຂອງພຣະເຢຊູຄຣິດເມື່ອ 2000 ປີ ກ່ອນນັ້ນບໍ່ພຽງແຕ່ເປັນຄວາມຈິງແຕ່ທຸກສິ່ງເກີດຂຶ້ນຕາມພຣະປະສົງຂອງພຣະອົງ ຊຶ່ງອາຈານໂປໂລໄດ້ປະກາດວ່າເມື່ອຄົບກໍານົດແລ້ວສິ່ງເຫຼົ່ານັ້ນກໍ່ເກີດຂຶ້ນຕາມພຣະປະສົງຂອງພຣະອົງ .

ໃນທັກສະນະດຽວກັນ, ພຣະເຈົ້າກໍ່ຍັງສືບຕໍ່ແລະນໍາພາໃຫ້ທຸກສິ່ງເກີດຂຶ້ນຕາມພຣະປະສົງຂອງພຣະອົງ. ຈຸດປະສົງໃນການທີ່ຈະຮູ້ນໍ້າພຣະທັຍຂອງພຣະອົງ . ພຣະອົງໄດ້ເປີດເຜີຍອອກໃຫ້ປະຊາຊາດທັງປວງເຫັນແຈ້ງເພື່ອເຂົາຈະໄດ້ເຊື່ອຟັງ . ອາຈານໂປໂລໄດ້ກ່າວອີກກ່ຽວກັບຄວາມຈິງແລະບອກໃຫ້ເຮົາຮູ້ແຕ່ຫົວທີໃນຈົດໝາຍຂອງເພິ່ນ. ເຮົາໄດ້ຮັບພຣະຄຸນແລະຕໍາແໜ່ງເປັນອັຄສາວົກເພື່ອເຫັນແກ່ພຣະນາມຂອງພຣະອົງ ໃຫ້ໄປປະກາດຖ້າມກາງຊົນຊາດຕ່າງໆໃຫ້ເຂົາເຊື່ອຟັງ . ( ໂຣມ 1 : 5 ) . ໃນຄໍາສັນລະເສີນພຣະເຈົ້າຂອງອາຈານ

ໂປໂລໄດ້ກ່າວເຖິງຄວາມລອດພົ້ນມີໄວ້ສໍາລັບມະນຸດທຸກຄົນ. " ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າ

ກໍ່ຈະພົ້ນ " . ( ໂຣມ 10 : 13 ) . ສຸດທ້າຍນີ້, ອາຈານໂປໂລໄດ້ສັນລະເສີນພຣະເຈົ້າ. ໂດຍບອກໃຫ້ຮູ້ວ່າສະຕິປັນຍາຂອງພຣະເຈົ້າແລະເສັ້ນທາງທີ່ຈະໄປເຖິງພຣະອົງ . ໄດ້ສຳແດງໃຫ້ຮູ້ແລະເຫັນແລ້ວໃນອົງພຣະເຢຊູຄຣິດ . ພຣະເຈົ້າບໍຣິສຸດແລະທ່ຽງທຳສຳລັບພຣະອົງແລ້ວບໍ່ມີບາບເລີຍ. "ທຸກຄົນໄດ້ເຮັດຜິດບາບແລະຂາດຈາກພຣະຣັສມີຂອງພຣະເຈົ້າ ( ໂຣມ 3 : 23 ) . ເຮັດແນວໃດ ເຮົາຈື່ງຈະມີຄວາມສັມພັນອັນດີກັບພຣະເຈົ້າຜູ້ບໍຣິສຸດໄດ້ ? ໂດຍພຣະປັນຍາຂອງພຣະອົງ . ມີທາງດຽວໂດຍພຣະເຢຊູຄຣິດ ( 1 ໂກຣິນໂທ 1:18 – 25 ) ສຳລັບພຣະເຈົ້າ ແລະພຣະອົງເອງກຽດຕິຍົດເປັນຂອງພຣະອົງສືບໄປເປັນນິດ. ຄວາມລອດພົ້ນນັ້ນພຣະອົງໄດ້ກະທຳໄວ້ເປັນທີ່ຮຽບຮ້ອຍແລ້ວ . ພຣະອົງໄດ້ຊົກຈູງຄົນຜູ້ນຶ່ງມາຫາພຣະອົງ . ໃຫ້ຄວາມພົ້ນແກ່ເຂົາແລະປົກປັກຮັກສາເຂົາຕລອດໄປ. ເປັນເວລາຍາວທີ່ຂ້າພະເຈົ້າຮັບໃຊ້ພຣະອົງຈຶ່ງຮູ້ໄດ້ວ່າທຸກສິ່ງທີ່ເຮົາໄດ້ຮັບນັ້ນແມ່ນມາຈາກພຣະຄຸນຂອງພຣະອົງ ເຮົາບໍ່ສົມຄວນເອົາມາອວດອ້າງຊຶ່ງກັນແລະກັນ. ແທນທີ່ພວກເຮົາຄວນສັຣເສີນໃນການຊົງເລືອກແລະການຊົງໄຖ່ເຮົາສຳລັບກຽດຕິຍົດຂອງພຣະອົງ. ກຽດຕິຍົດເປັນຂອງພຣະອົງສືບໄປເປັນນິດ ອາແມນ .

## <u>ບົດຮຽນແຫ່ງຊີວິດ</u>

ເຮົາສົມຄວນໃຫ້ວັນອາທິດຂອງເຮົາມີຜົນກະທົບຕໍ່ວັນຈັນຂອງເຮົາ, ເພາະການດຳລົງຊີວິດຂອງຜູ້ທີ່ເຊື່ອບໍ່ແມ່ນພຽງແຕ່ວັນອາທິດເທົ່ານັ້ນ ແຕ່ວັນຈັນເຖິງວັນເສົາກໍໃຫ້ເໝືອນກັນ . ເພາະເປັນພາກສ່ວນທີ່ໃຫ້ເຮົາມີສິດພິເສດແລະຄວາມຮັບຜິດຊອບທີ່ຈະແບ່ງປັນເຣື່ອງພຣະເຢຊູຄຣິດໃຫ້ຜູ້ທີ່ຢູ່ອ້ອມຂ້າງເຮົາແລະບ່ອນອື່ນໆ ທີ່ບໍ່ຮູ້ຈັກພຣະອົງ. ພຣະເຢຊູຄຣິດໄດ້ເວົ້າວ່າ: " ທ່ານທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດເມື່ອພຣະວິນຍານບໍຣິສຸດຈະສະເດັດມາເຖິງພວກທ່ານແລະພວກທ່ານຈະເປັນພຍານໃນກຸງເຢຣູຊາເລັມ, ຕລອດທົ່ວແຂວງຢູດາຍ . ກັບແຂວງຊາມາເຣັຽ , ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ. ( ກິຈການ 1: 8 ) .

- ບອກຄົນອື່ນເຣື່ອງພຣະເຢຊູໃນເມືອງ___________________(ເມືອງ-ກຸງເຢຣູຊາເລັມຂອງທ່ານ)
- ອະທິຖານເພື່ອການເປັນພຍານໃນຣັດ_________________(ຂົງເຂດ/ຣັດ ແຂວງຢູດາແລະແຂວງຊະມາເຣັຽ ຂອງທ່ານ.
- ຖວາຍຊ່ອຍຜູ້ຮັບໃຊ້(ມິສຊັນນາຣີ) ທີ່ອອກໄປປະກາດໃນປະເທດ_________________ (ປະເທດ-ສຸດປາຍແຜ່ນດິນໂລກ)
- ຊຽນຈົດໝາຍ (ຄຳສັຣເສີນ)ເພື່ອສັຣເສີນພຣະເຈົ້າທີ່ພຣະອົງໄດ້ຊົງອວຍພຣະພອນແກ່ທ່ານ

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by LLBC**